

# ພາສາລາວ

ມິຖຸນາ / ກໍລະກົດ / ສິງຫາ 2007

## ເບຍຢູ່ໃສ?



ນັກສຶກສາ ຫ້ອງຮຽນພາສາລາວ ປີ໒໐໐໗



ອາຈານກິດ ກໍາລັງສອນ



ຄໍາ ຮຽນກິນ ຕີນໄກ່



ອາຈານຈັນ ປະດັບປະດາ ພາຂວັນ

---

ເດືອນມິຖຸນາວັນທີ ໒໙ ປີ ໒໐໐໗ ນັກສຶກສາລາວແລະມົ້ງ ຊື່ອາຊີດີໃຈຫຼາຍ ເພາະວ່າຂະເຈົ້າໄດ້ມີໂອກາດພົບ ດອກເຕີ້ຊົມພູອຸດົມວິໄລແລະພັນລະຍາຊື່ຍາປ້າສຸລິສານ ມາຈາກ Australia. ດອກເຕີ້ຊົມພູ ເວົ້າກ່ຽວກັບ ເລື່ອງ ນະໂຍບາຍການສຶກສາແລະການເມືອງຢູ່ປະເທດລາວ ກ່ອນປີ ໑໙໗໕. ທ່ານໄດ້ເວົ້າວ່າ ທ່ານຕ້ອງເຂົ້າພົວພັນ ທາງດ້ານການເມືອງເພື່ອປ່ຽນລະບົບການສຶກສາຈາກການຮຽນເປັນພາສາຝຼັ່ງ ມາເປັນພາສາລາວເພື່ອໃຫ້ຄົນລາວ ທຸກຄົນໄດ້ມີໂອກາດຮຽນໜັງສືຫລາຍຂື້ນ. ພວກເພິ່ນໄດ້ ໂຕນໜີຈາກລາວໃນປີ ໑໙໗໖ ໄປເປັນຊາວສວນຢູ່ ປະເທດAustralia. ຍາປ້າສຸລິສານ ໄດ້ສອນຟ້ອນລໍາວົງ ແລະ ຟ້ອນສາລະວັນ ໃຫ້ພວກ ນັກສຶກສາ. ພວກຂະເຈົ້າ ຂໍຝາກຄວາມຂອບໃຈ ມາຍັງທ່ານທັງສອງ ໃນໂອກາດນີ້ດ້ວຍ.

ຂຽນໂດຍ: ຟ້າ ແລະ ຈ່ອຍ

## ດອກເຕີ້ຊົມພູອຸດົມວິໄລ



ດຣ. ຊົມພູແລະພັນລະຍາ ກໍາລັງສອນຟ້ອນລໍາວົງ

# ທີ່ວັດຣ໊ອກເຝີດ



ວັນອາທິດແລ້ວນີ້ນັກສຶກສາຫ້ອງອາຈານກິດແລະນັກສຶກສາຫ້ອງອາຈານຈັນໄປວັດໂພທິກາຣາມຢູ່ ເມືອງຣອັກເຝີດ. ຄົນຫລາຍໄດ້ໄປວັດໂພທິກາຣາມເພາະວ່າບຸນອອກພັນສາ. ທຸກຄົນຢູ່ວັດເປັນຄົນໃຈກວ້າງແລະເປັນມິດ. ຫລັງຈາກພິທີທຸກຄົນກິນເຂົ້ານຳກັນ. ອາຫານທຸກຢ່າງແຊບແລະບາງອາຫານເຜັດຫລາຍ. ທຸກຄົນດີໃຈຫລາຍ.

ຂຽນໂດຍ: ແດງ



ນັກສຶກສາ ຊິອາຊີ ກຳລັງໃສ່ບາດ

# ບາສີສູ່ຂ້ວນ

ວັນສຸກເດືອນ 7 ທີ 27 ປີ 2007 ນັກສຶກສາຢູ່ຫ້ອງຮຽນມົ້ງແລະລາວ ໄດ້ເຕົ້າໂຮມກັນຢູ່ຫ້ອງອິນກຣາແຮມຮອນ. ນັກສຶກສາ ມາຢູ່ຫ້ອງຮຽນ ເພາະວ່າ ເຂົາເຈົ້າລອນບາສີສູ່ຂ້ວນ ຂອງລາວ ແລະ ຮູປະສີ ຂອງມົ້ງ. ຕອນເລີ້ມຕົ້ນ ນັກສຶກສາ ປະດັບປະດາ ພາຂ້ວນ ດ້ວຍດອກໄມ້, ຫມາກໄມ້, ທຽນ, ແລະ ຝ້າຍຂາວ. ຫລັງຈາກນັ້ນ, ນັກສຶກສາ ຢູ່ ຫ້ອງຮຽນ 2 ຫ້ອງ ໄດ້ບັນລະຍາຍ ບາສີສູ່ຂ້ວນ ລາວແລະມົ້ງ.  ຫມົດທູກຄົນ ຢູ່ຫ້ອງຮຽນ ລາວໄດ້ເຂົ້າຮ່ວມ. ບາງຄົນ ອ່ານເລື້ອງພິທີບາສີ ແລະ ບາງຄົນຖ່າຍຮູບ. ອາຈານກິດ ແລະ ອາຈານຈັນ ເອົາອາຫານມາໃຫ້ ນັກສຶກສາກິນ. ເຂົາເຈົ້າໄດ້ຄົວກິນ ຕອນກາງຄືນ ແລະ ອາຈານມົ້ງ ກໍເອົາອາຫານມາຄືກັນ. ອາຫານແຊບຫລາຍໆ.

ລະຫວ່າງ ພິທີ ບາສີສູ່ຂ້ວນ ນັກສຶກສາ ສ່ວນຫຼາຍ ກິນອາຫານ, ໄດ້ຜູກແຂນ ແລະອວຍພອນ ຊື່ງກັນແລະກັນວ່າ: "ໂຊກລາບ ແລະ ສຸຂະ ພະລະ ເທີ້ນ." ຫມົດທູກຄົນ ອວຍພອນ ໃຫ້ກັນ ດ້ວຍຄວາມມ່ວນຊື່ນ.

ຂຽນໂດຍ: ນາລີ



ພິທີບາສີລາວແລະມົ້ງທີ່ອິນກຣາແຮມຮອນ

# ອາຫານລາວ

## ນັກສຶກສາໄປຕະຫລາດ



ວັນພຸດນັກສຶກສາຫມົດທຸກຄົນໄປຕະຫລາດສົດກາພິໂທນ ເມືອງເມດີສັນ. ພວກເຮົາຮຽນຊື້ຜັກແລະຫມາກໄມ້ເວົ້າເປັນພາສາລາວ. ຕະຫລາດມີພໍ່ຄ້າບາງຄົນເວົ້າພາສາລາວໄດ້. ທຳມະດາຄົນຢູ່ອາເມລິກາຕໍ່ລາຄາບໍ່ໄດ້ ແຕ່ອາຈານຈັນຕໍ່ລາຄາ ແລະແມ່ຄ້າຫລຸດລາຄາ. ນັກສຶກສາບາງຄົນຊື້ raspberries ແລະບາງຄົນຊື້ cheese curds. ທຸກ ໆ ຄົນໄດ້ກິນນຳກັນ. ຫລັງຈາກນັ້ນ ພວກເຮົາໄດ້ໄປຕະຫລາດ ພວກເຮົາໄດ້ຂຶ້ນໄປເທິງກາພິໂທນບ່ອນກໍ່ສ້າງໃຫມ່. ທຸກ ໆ ຄົນມ່ວນຊື່ນຫລາຍ.

ຂຽນໂດຍ: ຍິ້ມ



ນັກສຶກສາຊື້ຜັກ

## ຮ້ານອາຫານ ວຽງຈັນ ພາເລດ

ເດືອນທີກ ນັກສຶກສາຮຽນພາສາລາວ ໄດ້ໄປຮ້ານອາຫານ "ວຽງຈັນ ພາເລດ" (Vientiane Palace"). ພວກເຮົາກິນອາຫານທ່ຽງ. ພວກເຮົາໄດ້ລອງກິນອາຫານ ຫລາຍຊະນິດ. ບາງອາຫານເຜັດຫລາຍ ແຕ່ອາຫານທັງໝົດແຊບຫລາຍ ໆ ແລະບໍ່ແພງ.

ຂຽນໂດຍ: ເສືອ




## ຕຳຫມາກຫູ່ງ



ເສືອແລະເມວ ຮຽນຕຳຫມາກຫຸ່ງ

ອາຈານ 2 ຄົນໄດ້ຈັດເຄື່ອງປະກອບແລະອຸບປະກອນເຄື່ອງໃຊ້ເພື່ອເຮັດຕຳຫມາກຫູ່ງ. ແລ້ວນັກສຶກສາ 11 ຄົນພາກັນລ້າງມື ຂູດຫມາກຫູ່ງ ບາງຄົນກໍຕຳ ບາງຄົນກຊີມ ຍົກເວັ້ນຜູ້ຫນຶ່ງບໍ່ເຮັດຫຍັງ ເພາະວ່າລາວເປັນຄົນຖ່າຍຮູບ ແລະກິນຫລາຍ.

ຂຽນໂດຍ: ກອງ

# ລາຍການມ່ວນຊື່ນ



"Laughing out Lao" ມ່ວນຊື່ນຄ່ຳຄືນກາບກອນ

## ຄ່ຳຄືນກາບກອນ

ໃນຄ່ຳຄືນວັນເສົາທີ 21 ເດືອນມິຖຸນາ ຫົວຫນ້າທີ່ຮັບຜິດຊອບ ໄດ້ຈັດໃຫ້ມີ ລາຍການອ່ານຄຳກອນທີ່ Pyle Center ນີ້! ຄ່ຳຄືນກາບກອນ ມີ ເພງ ແລະ ໂຄງກອນຈຳນວນ ຫລາຍ ແຕ່ວ່າ ຜູ້ມາຟັງ ມັກການສະແດງເລື້ອງຊຽງຫມ້ຽງຫລາຍທີ່ສຸດ ເພາະເປັນການສະແດງເລື້ອງເສົ້າໃຈແລະຕະຫລົກ. ເວລາພຼະຍາ ເຈັບຊຽງໝ້ຽງບອກພຼະຍາວ່າ "ພຼະຍາ ຕ້ອງຕາຍ ພາຍໃນ 7 ວັນ" ພະຍາໄດ້ຍິນ ກໍເສົ້າໃຈແລະ ພຼະຍາຫົວເລາະ ເວລາຊຽງໝ້ຽງ ອະທິບາຍເມື່ອໃດພຼະຍາຈະຕາຍ. ຄົນມາຟັງຫົວດັງໆ.  ສະແດງເລື້ອງ ເກັ່ງຫລາຍນໍ! ຜູ້ແຕ່ງລະຄອນບໍ່ມີຄວາມຜິດຫວັງ ເພາະຜູ້ມາຟັງມັກຫລາຍ. ນອກນັ້ນລອນ ໄດ້ອ່ານໂຄງກອນ ກ່ຽວກັບ "ຄວາມຮັກຜູ້ບ່າວ". ກອງ ອ່ານໂຄງກອນ ກ່ຽວກັບ "ບໍ່ເຫັນຄົນຮັກ...ເຫັນແຕ່ນາ ກໍພໍ່ຢູ່". ຄຳ ອ່ານໂຄງກອນ ກ່ຽວກັບ "ຄຳລອນເດັກ" ທຸກໆຄົນຮູ້ໂຄງກອນ ລາວ! ມ່ວນຫລາຍເດ!

ຂຽນໂດຍ: ຄຳ



ພະຍາ ຍ້ານຕາຍ ພາຍໃນເຈັດວັນ

## ຢູ່ ເຮືອນ ຟ້າ



ນັ່ງລົມກັນຢູ່ເຮືອນຟ້າ

ນັກສຶກສາພາສາລາວໄດ້ໄປເຮືອນຟ້າແລະສະມາກເພື່ອກິນເຂົ້າ. ທຸກຄົນໄດ້ຖືອກິນອາຫານຕ່າງໆກັນເພື່ອກິນແລະສະມາກໄດ້ປີ້ງປາ. ອາຫານທຸກຢ່າງແຊບຫຼາຍ. ອາຈານຈັນແລະອາຈານກິດບໍ່ໄດ້ໄປແຕ່ພວກຂະເຈົ້າໄດ້ໂທຫາພວກເຮົາແຕ່ຊິຄາໂກເພື່ອເວົ້າພາສາລາວກັບທຸກຄົນ.

ຂຽນໂດຍ: ເມວ

## ອາຈານກິດ

ຂຽນໂດຍ: ຄຳ



ຄຳ ສຳພາດ ອາຈານກິດ

ນີ້ ແມ່ນ ອາຈານ ກິດ. ອາຈານ ມາ ແຕ່ ປະເທດ ລາວ. ອາຈານ ເກີດ ຢູ່ ແຂວງ ສະຫວັນນະເຂດ. ບ້ານ ອາຈານ ຢູ່ ຊິຄາໂກ. ອາຈານ ເຮັດ ວຽກ ທີ່ ບີກລາ ຢູ່ ຊິຄາໂກ. ອາຈານ ມາ ຢູ່ ອາເມລິກາ ພັນເກົ້າຮ້ອຍ ແປດສິບ (1980) ກັບ ຄອບຄົວ ລາວ. ອາຈານ ແຕ່ງງານ ກັບ ອາຈານ ຈັນ ຫລາຍ ປີ ແລ້ວ. ເຂົາເຈົ້າ ມີ ລູກ ສອງ ຄົນ. ລູກຊາຍ ຊື່ David ແລະ ລູກສາວ ຊື່ Linda. David ເຮັດ ວຽກ ສາທາລະນະສຸກ ຢູ່ ເມືອງ ຊິຄາໂກ. Linda ເຮັດ ວຽກ ຢູ່ ໂຮງຫມໍ ເປັນ ນາງແພດ. David ແລະ Linda ຍັງ ບໍ່ ໄດ້ ແຕ່ງງານ ເທື່ອ.



## ສອນ

ຂຽນໂດຍ: ແມວ

ສອນມາແຕ່ລັດດະອະຣິສໍນາເມືອງແຕ່ມພີ. ລາວເປັນນັກສຶກສາ.ສອນຮຽນຊີວະວິທະຍາ ທີ່ມະຫາວິທະຍາໄລອະຣິສໍນາແລຊີສຳເລັດການສຶກສາເດືອນຫ້າ2008.ພໍ່ຂອງສອນເປັນຄົນລາວ ແລະແມ່ລາວເປັນຄົນອາເມລິກາ. ເມື່ອໃດລາວເປັນສາວສອນບໍ່ໄດ້ຮຽນພາສາລາວ. ຍາມນີ້ລາວຢາກ ເວົ້າໄດ້,ອານໄດ້ແລະຂຽນໄດ້ພາສາລາວເກັ່ງຫລາຍ. ພີ່ນ້ອງລາວບາງຄົນອາໄສຢູ່ເມືອງ ວຽງຈັນປະເທດລາວແລະໝູ່ບ້ານນ້ອຍໃກ້ວຽງຈັນ.ສອນໄດ້ໄປປະເທດລາວ ປີ 2005. ປີໜ້າລາວຢາກກັບມາແລະໄປຢາມຄອບຄົວ. ບາງມື້ລາວຢາກມາຢູ່ແລະເຮັດວຽກຢູ່ປະເທດລາວ.

# ອາຈານ

# ພາສາລາວ



# ສຳພາດ



## ກອງ

ຂຽນໂດຍ: ຈ່ອຍມາລາວົງ

ຊື່: ກອງ Joel Pickford
ມາຈາກ: ຄາລີຟໍເນຍ
ອາຊີບ: ຊ່າງຖ່າຍຮູບ
ປີໜ້າຈະຢູ່ໃສ? ຄາລີຟໍເນຍ, ປະເທດລາວ, ປະເທດໄທ, ປະເທດເມັກຊິໂກ
ກິດຈະກຳເວລາວ່າງ: ດົນຕີ

ນີ້ແມ່ນກອງ.ຊື່ອັງກິດແມ່ນໂຈລ.ລາວມາແຕ່ລັດກາລີຟໍເນຍເມືອງແຟດສະໂນ.ລາວມີອ້າຍສອງຄົນແລະນ້ອງສາວຄົນໜຶ່ງ. ລາວເປັນຊ່າງຖ່າຍຮູບ ຊາວປີແລ້ວ. ເດືອນພະຈິກແລະເດືອນທັນວາ ປີກາຍນີ້ລາວໄດ້ໄປ ຖ່າຍຮູບຄົນມົ້ງຢູ່ປະເທດລາວ. ລາວຢາກໄປເຮັດວຽກຢູ່ປະເທດລາວ.

ຂຽນໂດຍ: ເສືອ

## ນາລີ



ຊື່: ນາລີ Leena Her
ມາຈາກ: ຊານຟຣານຊິສະໂກ
ອາຊີບ: ນັກສຶກສາ
ປີໜ້າຈະຢູ່ໃສ? ໄປ ປະເທດລາວ ເພື່ອ ວິໄຈ
ກິດຈະກຳເວລາວ່າງ: ຂ້ອຍ ມັກ ເຮັດກິນ (ອາຫານ) ອ່ານ ປຶ້ມ, ແລະ ໄປ ທ່ອງ ປະເທດ ກັບ ໝູ່ ຂ້ອຍ

Leena Her ຊື່ນາລີ. ນາລີເກີດຢູ່ແຂວງວຽງຈັນ. ລາວອາຍຸ 29 ປີ. ນາລີຢູ່ປະເທດລາວ 2 ປີ ແລະໄດ້ຫລົບໜີ ຈາກລາວ ມາຢູ່ປະເທດໄທ. ລາວມາຢູ່ ອາເມລິກາ 27 ປີ. ລາວຢູ່ຄາລີຟໍເນຍນຳຄອບຄົວ. ນາລີມີນ້ອງ 8 ຄົນ. ບ້ານລາວຢູ່ຄາລີຟໍເນຍ. ລາວເປັນນັກສຶກສາທີ່ມະຫາວິທະຍາໄວສະແຕນເຟີດ. ນາລີເຂົ້າໂຮງຮຽນ ທີ່ອາເມລິກາ.

ລາວຈະສຳເລັດການສຶກສາເດືອນ 12 ແລະຈະໄປປະເທດລາວເດືອນສາມ ປີ 2008. ລາວຈະເຂົ້າໂຮງຮຽນ ທີ່ປະເທດລາວ. ນາລີມີອ້າຍນ້ອງເກົ້າ (9) ຄົນ. ລາວມີນ້າບ່າວແລະນ້າສາວຫ້າສິບ (50) ຄົນ.

# ສຳພາດ



## ຟ້າ

ຂຽນໂດຍ: ແດງ

ຊື່ : ຟ້າ ສຸຍສີຍາ (Kimberly Marion Suiseeya)

ມາຈາກ : Salt Lake City, Utah

ອາຊີບ : ນັກສຶກສາ ກ່ຽວກັບ ນະໂຍບາຍ ສິ່ງແວດລ້ອມ

ປີໜ້າຈະຢູ່ໃສ? ປີໜ້າ ຂ້ອຍ ຊິ ຢູ່ ປະເທດລາວ ແຂວງ ຈຳປາສັກ

ກິດຈະກຳເວລາວ່າງ : ຂ້ອຍ ມັກ ເດີນທາງ, ໄປ ຍ່າງຫຼິ້ນ ແລະ ຂີ່ ລົດຖີບ ກັບ ສະມັກ (ລາວ ເປັນ ຜົວ ຂອງ ຂ້ອຍ)

ນີ້ແມ່ນຟ້າ. ຊື່ອັງກິດແມ່ນ Kim. ລາວມາແຕ່ ລັດຢູທາ. ຟ້າມີເອື້ອຍໜຶ່ງຄົນ. ຜົວຂອງຟ້າຊື່ສະມາກ. ລາວເປັນຄົນອີສານ. ເຂົາເຈົ້າແຕ່ງງານປີສອງພັນຫ້າເດືອນສອງວັນທີຫ້າ. ຟ້າຂຽນພາສາລາວຊັ້ນກາງ. ລາວເປັນນັກສຶກສາຂຽນກ່ຽວກັບສິ່ງແວດລ້ອມ. ເດືອນສິບປີນີ້ລາວຊິໄປປະເທດລາວ. ລາວຊິເຮັດວຽກໃກ້ເມືອງຈຳປາສັກ. ລາວຊິເຮັດວຽກຢູ່ຊິນນະບົດ.

## ເບຍ

ຂຽນໂດຍ: ຍິ້ມ



ຊື່ : (ເບຍ) (Michael Marhoefer)

ມາຈາກ : ແມດີສັນ ວິສະຄອນຊິນ (Madison)

ອາຊີບ : ຊ່າງ ຈັກ

ປີໜ້າຈະຢູ່ໃສ? ອາເມຣິກາ

ກິດຈະກຳເວລາວ່າງ : ທ່ອງ ທ່ຽວ ເບິ່ງ ໂລກ ຫຼາຍ ປະເທດ

ຊື່ລາວແມ່ນເບຍ. ຊື່ອັງກິດແມ່ນ Michael. ລາວມາແຕ່ Indiana.ເບຍເປັນນາຍຊ່າງຈັກ.

ລາວມັກອາຫານ ຝະລັ່ງ. ລາວມາຈາກຄອບຄົວໃຫຍ່. ລາວມີນ້ອງຊາຍ 4 ຄົນແລະນ້ອງສາວ 2 ຄົນ. ປີ 2006

ລາວຢາກໄປ World Cup, ແຕ່ລາວບໍ່ມີເງິນພໍ. ສະນັ້ນເບຍໄດ້ໄປປະເທດໄທແລະປະເທດລາວ ເດືອນ 6.

ລາວໄດ້ໄປຫລວງພະບາງ, ວັງວຽງແລະວຽງຈັນ. ຢູ່ປະເທດລາວມີຍຸງຫລາຍແລະຝົນຕົກຫລາຍ.

# ສຳພາດ

## ຈ່ອຍ

ຂຽນໂດຍ: ກອງ



ຊື່ : ຈ່ອຍ ມາລາວົງ (Toby Malavong)
ມາຈາກ : Clinton, Iowa
ອາຊີບ : ນັກສຶກສາ ປະລິນຍາຕີ BA ພະແນກ ພາສາ ອັງກິດ
ປີໜ້າຈະຢູ່ໃສ? ຢູ່ລັດ Iowa ຫລັງຈາກ ຈະໄປ ຢູ່ ປະເທດ ລາວ
ກິດຈະກຳເວລາວ່າງ : ຂ້ອຍ ມັກ ອ່ານ ປຶ້ມ, ຟັງ ເພງ ທຸລາ ຊະນິດ, ໄປຍ່າງຫລິ້ນ ແລະ ກິນ ເຂົ້າ ລວມ ໝູ່.

ຈ່ອຍມາລາວົງໄດ້ເກີດຢູ່ບ້ານພະຄາ, ໃກ້ສະຫວັນນະເຂດ, ປະເທດລາວ. ເວລາຈ່ອຍອາຍຸ 6 ປີ,ຄອບຄົວລາວໄດ້ໜີຈາກປະເທດລາວແລະໄປປະເທດອາເມລິກາ, ລັດ Iowa,ເມືອງ Clinton. ເຂົາເຈົ້າເປັນອົບພະຍົບໜີຈາກລັດຖະບານ ສ.ປ.ປ.ລ. ຈ່ອຍຮຽນພາສາລາວເພາະວ່າລາວມີພີ່ນ້ອງຢູ່ສະຫວັນນະເຂດ. ລາວເວົ້າພາສາລາວເກັ່ງຫລາຍ, ແຕ່ລາວອ່ານແລະຂຽນໄດ້ໜ້ອຍນຶ່ງ. ຕອນນີ້ລາວຮຽນອ່ານແລະຂຽນລາວຢູ່SEASSI. ປີກາຍຈ່ອຍໄດ້ຮັບປະລິນຍາພາສາອັງກິດຈາກມະຫາວິທະຍາໄລ Ashford ຢູ່ Iowa.
ປີນີ້ລາວໄດ້ໄປສະຫວັນນະເຂດເພື່ອ

ຂຽນໂດຍ: ອາຈານກິດ

## ຄຳ

ຊື່ : ຄຳ (Ryan Ford)
ມາຈາກ : ລັດ ຄັນເນັກທີຄັດ
ອາຊີບ : ນັກສຶກສາ ປະວັດສາດລາວ
ປີໜ້າຈະຢູ່ໃສ? ຈະໄປ ປະເທດລາວ
ກິດຈະກຳເວລາວ່າງ : ຮຽນປະວັດສາດ, ເຕັ້ນລາທ້, ພົບ ຄົນ ໃໝ່



ສຳພາດ ຄຳ

ຄຳເວົ້າວ່າ " ຊື່ອັງກິດແມ່ນ Ryan Ford. ຂ້ອຍມາຈາກ ລັດ Connecticut ແລະ ກຳລັງຮຽນຢູ່ມະຫາວິທະຍາໄລ ເພື່ອຊິເປັນ ນັກປະຫວັດສາດລາວ. ປີໜ້າ ຂ້ອຍຈະໄປປະເທດລາວ. ການເດີນທາງເທື່ອນີ້ແມ່ນການເດີນທາງ ຄັ້ງທຳອິດຂອງຂ້ອຍ. ດຽວນີ້ ອາຍຸຂ້ອຍ 23 ປີ ແລະ ຂ້ອຍມີແຟນແລ້ວ. ພໍ່ແມ່ຂ້ອຍຢູ່ລັດ ຈໍເຈຍ (Georgia) ແລະອ້າຍຢູ່ ລັດເວີມອນ (Vermont). ພວກເຂົາພໍ້ກັນເລື້ອຍໆ."

ຂຽນໂດຍ ອາຈານກິດ

# ສຳພາດ




## ແມວ

ຂຽນໂດຍ: ສອນ

ຊື່: ແມວ Kathy Anderson
ມາຈາກ: ລັດ ເວີຈິເນຍ
ອາຊີບ: ນາງພະຍາບານ
ປີໜ້າຈະຢູ່ໃສ? ປະເທດ ລາວ
ກິດຈະກຳເວລາວ່າງ: ຂ້ອຍ ມັກ ອ່ານ, ຄົວກິນ, ແລະ ຫຼິ້ນ ກັບ ຫຼານຊາຍ ແລະ ຫຼານສາວ ຂອງ ຂ້ອຍ

ສອນ ສຳພາດ ແມວ

ຜູ້ນີ້ແມ່ນ ແມວ ຊື່ອັງກິດ ແມ່ນ Kathy Anderson ລາວ ລັດ Virginia ເມືອງ Chester ລາວ ໄດ້ ແຕ່ງງານ ແລ້ວ ຜົວ ຂອງ ລາວ ຊື່ ເສືອ ແລະ ຊື່ ອັງກິດ ແມ່ນ David ໄດ້ ແຕ່ງງານ 34 ປີ ເຂົາເຈົ້າ ມີ ລູກ 2 ຄົນ ລູກ 2 ຄົນ ໄດ້ ແຕ່ງງານ ແລ້ວ ລູກ ຊາຍ ອາຍູ 29 ປີ ລາວ ຢູ່ ລັດ North Carolina ລູກ ສາວ ອາຍູ 32 ປີ ລາວ ຢູ່ ລັດ Maryland ແລະ ມີ ລູກ 2 ຄົນ ເຂົາເຈົ້າ ຈະ ໄປ ຢູ່ ປະເທດ ລາວ ເມືອງ ປາກເຊ ແລະ ເມືອງ ຈຳປາສັກ ເດືອນ ຕຸລາ ປີນີ້ ລາວ ຊິ ເປັນ ນາງແພດ     ເປັນ ອາຈານ ສອນ ພາສາອັງກິດ ເຂົາເຈົ້າ ຈະ ມີ ຊີວິດ ໃໝ່ ຢູ່ ປະເທດລາວ.

ຂຽນໂດຍສອນ

ຂຽນໂດຍ: ນາລີ

## ເສືອ

ຊື່: ເສືອ David Anderson
ມາຈາກ: ເວີຈິເນຍ
ອາຊີບ: ວິສະວະກອນ
ປີໜ້າຈະຢູ່ໃສ? ປະເທດ ລາວ
ກິດຈະກຳເວລາວ່າງ: ອ່ານ ປຶ້ມ ອ້ອມແປງ ແລະ ປັບປຸງສິ່ງຂອງ




ເສືອ ບໍ່ມີບ້ານ ແຕ່ວ່າ ບໍ່ເປັນຫ່ວງ. ເດືອນທັນວາ ລາວຊິໄປ ປະເທດລາວ ກັບເມຍລາວຊື່ Kathy. ເຂົາເຈົ້າ ແຕ່ງງານໄດ້ 34 ປີແລ້ວ.     ເສືອຊິໄປ ປະເທດລາວ ເພາະວ່າ ລາວມີວຽກການ  ແຕ່ວ່າ ລາວບໍ່ຮູ້ວ່າ ລາວຊິ ເຮັດຫຍັງ. ລາວຊິອາໄສ ຢູ່ທີ່ປະເທດລາວ. ເສືອໄດ້ເດີນທາງຫລາຍໆ. ລາວໄດ້ເດີນທາງໄປຫລາຍປະເທດ ລາວໄດ້ໄປ ປະເທດ Brazil, Isreal, Jordan, ແລະ Kenya. ເພື່ອການເດີນທາງ ໃນໄວໆນີ້ເສືອໄດ້ຮຽນ ພາສາລາວຢູ່ວິດສຄອນສິນ.ລາວຢາກເວົ້າ ພາສາລາວ ກັບ ປະຊາຊົນຄົນລາວ. ລາວເປັນ ນັກວິສະວະກອນ. ດຽວນີ້ ລາວໃຊ້ ຄວາມພະຍາຍາມ ເພື່ອຮຽນພາສາລາວ. ເສືອຊິຄິດ ຮອດລູກຫລານລາວ. ລູກສາວລາວ ເປັນອາຈານສອນທີ່ ມະຫາວິທະຍາໄລ John Hopkins ແລະ ລູກຊາຍ ລາວເປັນ ຊ່າງຄອມພິເຕີ ລູກສາວ ລາວ ແຕ່ງງານແລ້ວ. ລາວມີລູກ 2 ຄົນ. ລາວ ມີ ລູກຊາຍ 1 ຄົນແລະລູກສາວ 1 ຄົນ. ລູກຊາຍ ຂອງ ເສືອ ຍັງ ບໍ່ ໄດ້ ແຕ່ງງານ ເທື່ອ. ເສືອດີໃຈຊິໄປ ປະເທດລາວ ແຕ່ວ່າ ລາວ ຄິດຮອດ  ລາວ.

# ສຳພາດ



## ແດງ

ຂຽນໂດຍ: ພ່າ

ຊື່ : ແດງ Jason Ford
ມາຈາກ : ລັດມິຊິຊິປີ
ອາຊີບ : ນັກສຶກສາ
ປີໜ້າຈະຢູ່ໃສ? ວຽງຈັນ
ກິດຈະກຳເວລາວ່າງ : ມັກອ່ານປື້ມ ມັກແລ່ນ ມັກແລ່ນສະກີ ມັກກິນອາຫານຍິ້ມເຮັດ

ຜູ້ນີ້ແມ່ນແດງ. ລາວມາຈາກລັດມິຊິຊິປີ ເມືອງອໍລິວເບັນ ໄກ້ເມັມພິສ. ແດງຮຽນພາສາລາວ ເພາະວ່າ ລາວຊິໄປປະເທດລາວອີກ ၈ ເດືອນ. ລາວໄດ້ໄປລາວແລ້ວໃນປີ໒໐໐໘. ແດງມັກປະເທດລາວ. ລາວຄິດວ່າ ສິ່ງແວດລອ້ມງາມຫລາຍ ແລະ ລາວມັກກິນອາຫານລາວ. ແດງບໍ່ໄດ້ເຮັດວຽກ ລາວມັກໄປທ່ຽວຢູ່ຫລາຍປະເທດ. ລາວໄດ້ໄປປະເທດ Uganda, Myanmar, ຕ່ໆໄປ. ແດງໄດ້ແຕ່ງງານ ປີ໒໐໐໔ ເດືອນ໒ ວັນທີ ໒໖. ເມຍຂອງແດງຊື່ຍິ້ມ. ຂະເຈົ້າ ຮຽນພາສາລາວນຳກັນ ເພາະວ່າ ຂະເຈົ້າເຮັດວຽກ ທີ່ ວຽງຈັນ ຢູ່ ລາວ National Tourism Authority ແຕ່ຂະເຈົ້າ ບໍ່ຮູ້ວ່າ ຊິເຮັດຫຍັງ. ແດງເປັນຄົນໃຈດີ ແລະ ຕາລົກ. ພົບກັນຢູ່ລາວ!

## ຍິ້ມ

ຂຽນໂດຍ: ເບຍ



ຊື່ : ຍິ້ມ Beth Ford
ມາຈາກ : ລັດມິຊິຊິປີ
ອາຊີບ : ນັກສຶກສາ
ປີໜ້າຈະຢູ່ໃສ? ວຽງຈັນ
ກິດຈະກຳເວລາວ່າງ : ມັກເຮັດກິນ, ມັກອ່ານປື້ມ

ຊື່ລາວ ຍິ້ມ

ຊື່ອັງກິດ Bethany Ford

ຍິ້ມເກີດຢູ່ລັດ ອາລາບາມາ (Alabama) ແຕ່ ເຮືອນແລະຄອບຄົວຂອງຍິ້ມ ຢູ່ເມືອງ Hernando, ລັດ ມີຊີສິບປີ (Mississippi). ຍິ້ມແຕ່ງງານກັບແດງ. ຍິ້ມເຮັດການເປັນອາຈານ ສອນສິນລະປະ ຢູ່ເມືອງ Memphis, ລັດ Tennesse. ຍິ້ມແລະແດງຈະໄປເຮັດວຽກ ຢູ່ປະເທດລາວ. ຍິ້ມຈະເປັນອາຈານ ສອນພາສາອັງກິດໃຫ້ພະນັກງານກົມທ່ອງທ່ຽວຢູ່ລາວໃນໄວໆນີ້.

# ກວດນໍ້າ ຂອງກອງ
# ຢູ່ໃສ?

ແຕ້ມໂດຍ: ນາລີ



ຢ່າພາດ!

# ເວົ້າ, ອ່ານ, ຂຽນ...

University of Wisconsin –Madison
Southeast Asian Summer Studies Institute

# ຮຽນພາສາລາວ!







## ກຳລັງຮັບນັກສຶກສາ ລະດູຮ້ອນ

- ສອນໂດຍອາຈານ ຄົນລາວທີ່ມີປະສົບການ ແລະຄຸນວຸດທິສູງ

- ຮຽນຮູ້ວັດທະນະທຳ: ກິນເຂົ້າໜຽວ, ຟ້ອນລຳວົງ ແລະ ຮ້ອງເພັງກະລະໂອເກ

***Speak... Read... Write...***
***during our 8 Week Lao Summer Session!***

## ມ່ວນຫຼາຍ!

ມີຄຳຖາມເຊີນຕິດຕໍ່ Mary Jo Studenberg | mjstuden@wisc.edu
ຕິດຕໍ່ໄດ້ ທີ່ຫ້ອງການ SEASSI ທີ່ UW-Madison | ໂທ: 608-263-1755
Email: seassi@intl-institute.wisc.edu | Website: http://seassi.wisc.edu/

## ມີ ເງິນທຶນ Scholarships!